ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

--------000--------

ທະນາຄານ ແຫ່ງ ສປປ ລາວ

ສໍານັກງານ ຄຄຊ

ເລກທີ: 925 /ສຄຄຊ

ນະຄອນຫຼວງວຽງຈັນ, ວັນທີ: 29 JUL 2014

# ຂໍ້ຕົກລົງ

## ວ່າດ້ວຍການແບ່ງຄວາມຮັບຜິດຊອບ ພາຍໃນຄະນະ ສໍານັກງານ ຄຄຊ

- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ສໍານັກງານ ຄະນະກໍາມະການຄຸ້ມຄອງຫຼັກຊັບ ສະບັບເລກທີ 013/ຄຄຊ, ລົງວັນທີ 17 ມີນາ 2010.
- ອີງຕາມ ຂໍ້ຕົກລົງວ່າດ້ວຍການຍົກຍ້າຍພະນັກງານ ແລະ ແຕ່ງຕັ້ງຮອງຫົວໜ້າຄະນະກໍາມະການຄຸ້ມຄອງຫຼັກຊັບ ສະບັບເລກທີ: 488/ທຫລ ລົງວັນທີ: 27 ມິຖຸນາ 2014.

## ຫົວໜ້າສໍານັກງານ ຄຄຊ ຕົກລົງ:

**ມາດຕາ 1:** ແບ່ງຄວາມຮັບຜິດຊອບພາຍໃນ ສໍານັກງານ ຄຄຊ ລາຍລະອຽດດັ່ງລຸ່ມນີ້:

1. **ທ່ານ ນ. ວັດທະນາ ດາລາລອຍ, ຫົວໜ້າ ສໍານັກງານ ຄຄຊ ຮັບຜິດຊອບ:**

- ຊີ້ນໍາວຽກງານດ້ານການເມືອງແນວຄິດຂອງພະນັກງານ;
- ວຽກງານການຈັດຕັ້ງ ແລະ ພະນັກງານ;
- ວຽກງານການເງິນ;
- ເປັນເຈົ້າການປະສານກັບ ຄຄຊ ແລະ ກະກຽມກອງປະຊຸມ ຄຄຊ;
- ລົງເລິກຊີ້ນໍາການສ້າງແຜນຍຸດທະສາດພັດທະນາຕະຫຼາດທຶນຮອບດ້ານ;
- ຊີ້ນໍາລວມວຽກງານ 6 ພະແນກ ໂດຍຜ່ານການສະເໜີ ແລະ ລາຍງານຂອງ ຮອງຫົວໜ້າ ສໍານັກງານ ຄຄຊ;
- ປະຕິບັດວຽກງານອື່ນໆ ຕາມການມອບໝາຍຂອງຂັ້ນເທິງ.

2. **ທ່ານ ນ. ສາຍສະໝອນ ຈັນທະຈັກ, ຮອງຫົວໜ້າ ສຳນັກງານ ຄຄຊ ຮັບຜິດຊອບ:**

- ຊີ້ນຳວຽກງານກວດກາລັດ;
- ຊີ້ນຳວຽກງານ ຂອງ 3 ພະແນກຄື: ພະແນກຄຸ້ມຄອງສະຖາບັນສື່ກາງດ້ານຫຼັກຊັບ, ພະແນກຄຸ້ມຄອງການອອກຈຳໜ່າຍຫຼັກຊັບ ແລະ ພະແນກຈັດຕັ້ງ ແລະ ບໍລິຫານ;
- ຊີ້ນຳວຽກງານຄົ້ນຄ້ວາທີ່ຕິດພັນກັບ ການພັດທະນາຜະລິດຕະພັນຫຼັກຊັບໃໝ່ ແລະ ວິທີການຄຸ້ມຄອງສະຖາບັນສື່ກາງດ້ານຫຼັກຊັບ;

3. **ທ່ານ ສຸລິສັກ ທຳນຸວົງ, ຮອງຫົວໜ້າ ສຳນັກງານ ຄຄຊ ຮັບຜິດຊອບ:**

- ຊີ້ນຳວຽກງານ 3 ອົງການຈັດຕັ້ງມະຫາຊົນ, ຂະບວນການ ແລະ ວຽກງານປ້ອງກັນ;
- ຊີ້ນຳວຽກງານ ຂອງ 3 ພະແນກຄື: ພະແນກຄຸ້ມຄອງຕະຫຼາດຫຼັກຊັບ, ພະແນກນິຕິກຳ ແລະ ພະແນກຝຶກອົບຮົມ ແລະ ໂຄສະນາເຜີຍແຜ່.
- ຊີ້ນຳວຽກງານຄົ້ນຄ້ວາ ກ່ຽວກັບການຄຸ້ມຄອງຕະຫຼາດຫຼັກຊັບ ແລະ ການພັດທະນາພື້ນຖານໂຄງລ່າງ.

**ມາດຕາ 2:** ບັນດາທ່ານໃນຄະນະສຳນັກງານ, ຄະນະພະແນກ, ພະນັກງານ ວິຊາການທີ່ຂຶ້ນກັບ ສຳນັກງານ ຄຄຊ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດ ໃຫ້ໄດ້ຮັບຜົນດີ.

**ມາດຕາ 3:** ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ຫົວໜ້າ ສຳນັກງານ ຄຄຊ**

ຄະນະກຳມະການຄຸ້ມຄອງຫຼັກຊັບ ★ ສຳນັກງານ ຄຄຊ ★

**ວັດທະນາ ດາລາລອຍ**